ລັດວິສາຫະກິດຖືຮຸ້ນລາວ

LAO HOLDING STATE ENTERPRISE

# ລາຍງານປະຈຳປີ

# ANNUAL REPORT

# 2020



WWW.LAOHOLDING.COM

ISO 9001 5965

Cert No. 63Q16125

ລັດວິສາຫະກິດຖືຮຸ້ນລາວ

# ລາຍງານປະຈຳປີ

## ANNUAL REPORT



# 2020

















# ສາລະບານ


| | ໜ້າ |
|---|---|
| **ບົດຄວາມຂອງທ່ານຜູ້ອຳນວຍການ** | i |
| **ພາລະບົດບາດ, ໜ້າທີ່, ວິໄສທັດ, ນະໂຍບາຍລວມ ແລະ ກົງຈັກການຈັດຕັ້ງຂອງ ລຮລ** | 1 |
| 1. ພາລະບົດບາດ ແລະ ໜ້າທີ່ | 1 |
| 2. ວິໄສທັດ | 3 |
| 3. ນະໂຍບາຍລວມຂອງ ລຮລ | 3 |
| 4. ກົງຈັກການຈັດຕັ້ງຂອງ ລຮລ | 4 |
| **ເຫດການເດັ່ນປີ 2020** | 7 |
| **ການລົງທຶນ ແລະ ຜົນການດຳເນີນທຸລະກິດຂອງ ລຮລ** | 11 |
| **ການຈັດຕັ້ງປະຕິບັດຂອງບັນດາໂຄງການທີ່ ລຮລ ຮ່ວມທຶນ** | 13 |
| ໂຄງການໄຟຟ້ານ້ຳເທີນ 2 | 13 |
| ໂຄງການໄຟຟ້າຄວາມຮ້ອນຫົງສາ | 17 |
| ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ | 20 |
| ໂຄງການໄຟຟ້ານ້ຳງຽບ 1 | 22 |
| ທຸລະກິດຂີ້ເທົ່າລອຍ ແລະ ຍິບຊຳ | 24 |
| **ໂຄງການໃໝ່ຢູ່ໃນແຜນຮ່ວມພັດທະນາ** | 25 |
| ໂຄງການໄຟຟ້າແສງຕາເວັນເທິງອ່າງເກັບນ້ຳໂຄງການໄຟຟ້ານ້ຳເທີນ 2 | 25 |
| ໂຄງການໄຟຟ້າພະລັງງານຄວາມຮ້ອນຖ່ານຫີນບົວລະພາ | 25 |
| **ການບໍລິຫານ ແລະ ການປະຕິບັດສັນຍາໂຄງການ** | 26 |
| **ການປະຕິບັດພັນທະຕາມກົດໝາຍ** | 28 |
| **ການບໍລິຫານລາຍຮັບ-ລາຍຈ່າຍ** | 28 |
| **ການພັດທະນາບຸກຄະລາກອນ ແລະ ອົງກອນ** | 30 |
| **ການປະກອບສ່ວນຕໍ່ສັງຄົມ** | 31 |
| **ພາກສະຫຼຸບ** | 32 |

# ບົດຄວາມຂອງທ່ານຜູ້ອຳນວຍການ



ໃນທ່າມກາງທີ່ທົ່ວພັກທົ່ວລັດ, ທົ່ວປວງຊົນລາວທັງຊາດ ສືບຕໍ່ສຸມໃສ່ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ໃນທ້າຍສະໄໝ (2016-2020) ຢ່າງເປັນຂະບວນຟົດຟື້ນ ພ້ອມທັງການສ້າງຜົນງານເພື່ອຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ແລະ 2 ວັນປະຫວັດສາດ ຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 66 ປີ ແລະ ວັນສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 46 ປີ. ລັດວິສາຫະກິດຖືຮຸ້ນລາວ (ລຮລ) ທີ່ຖືກສ້າງຕັ້ງຂຶ້ນໃນວັນທີ 23 ກຸມພາ 2005, ໃນນາມເປັນຫົວໜ່ວຍທຸລະກິດໜຶ່ງຂອງລັດທີ່ຂຶ້ນກັບກະຊວງພະລັງງານ ແລະ ບໍ່ແຮ່ ໂດຍມີກະຊວງການເງິນເປັນເຈົ້າຂອງທຶນ 100% ກໍ່ໄດ້ອອກແຮງສຸມໃສ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນຢ່າງຕັ້ງໜ້າ ເພື່ອສ້າງຜົນງານຕ້ອນຮັບເຫດການສຳຄັນດັ່ງກ່າວ. ໃນປີ 2020 ຜ່ານມາ, ລຮລ ໃນນາມຕາງໜ້າໃຫ້ຂາຮຸ້ນຂອງລັດຖະບານ ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານໃນບັນດາໂຄງການທີ່ ລຮລ ເຂົ້າຮ່ວມຖືຮຸ້ນຕາມພາລະບົດບາດຂອງຕົນເຊັ່ນ: ການດຳເນີນການຜະລິດ, ການບຳລຸງຮັກສາ, ການຄຸ້ມຄອງບໍລິຫານໂຄງການຮ່ວມກັບບັນດາຂາຮຸ້ນຕ່າງປະເທດ, ການບໍລິຫານສັນຍາ, ການບໍລິຫານເງິນກູ້ຢືມເພື່ອປະກອບເປັນທຶນຮຸ້ນຂອງຕົນ, ການຕິດຕາມລາຍຮັບເງິນປັນຜົນ, ການດຳເນີນທຸລະກິດຊື້ເທົ່າລອຍ ແລະ ຢືບຊຳໃນໂຄງການໄຟຟ້າຄວາມຮ້ອນຫົງສາ, ການຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍ, ການມອບພັນທະຕ່າງໆຕາມລະບຽບກົດໝາຍ ລວມທັງການຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ລັດຖະບານຕາມສັນຍາກູ້ຢືມຕໍ່ຈາກກະຊວງການເງິນ. ປະຈຸບັນ ລຮລ ໄດ້ຮັບມອບໝາຍຈາກລັດຖະບານໃຫ້ເຂົ້າຮ່ວມຖືຮຸ້ນໃນ 4 ໂຄງການຄື: ໂຄງການໄຟຟ້ານ້ຳເທີນ 2 (1.080 MW), ໂຄງການໄຟຟ້າຄວາມຮ້ອນຫົງສາ (1.878 MW), ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ (410 MW) ແລະ ໂຄງການໄຟຟ້ານ້ຳງຽບ 1 (290 MW) ລວມກຳລັງຕິດຕັ້ງທັງໝົດ 3.658 MW, ພະລັງງານໄຟຟ້າ 21.551 ລ້ານກິໂລວັດໂມງຕໍ່ປີ ແລະ ມີມູນຄ່າການລົງທຶນ 7.063 ລ້ານໂດລາສະຫະລັດ. ໃນນັ້ນ, ທຶນຮຸ້ນຂອງ ລຮລ ແມ່ນ 536,64 ລ້ານໂດລາສະຫະລັດ. ນອກຈາກການລົງທຶນໃນທຸລະກິດໄຟຟ້າແລ້ວ, ໃນປີ 2014 ແລະ 2019 ຍັງໄດ້ຮັບມອບໝາຍຈາກລັດຖະບານໃຫ້ດຳເນີນທຸລະກິດຊື້ເທົ່າລອຍ ແລະ ຢືບຊຳໃນໂຄງການໄຟຟ້າຄວາມຮ້ອນຫົງສາຕື່ມອີກ. ປີ 2020 ຜ່ານມາ, ທັງ 4 ໂຄງການຜະລິດພະລັງງານໄຟຟ້າໄດ້ 18.938 ລ້ານກິໂລວັດໂມງ, ສ້າງລາຍຮັບໄດ້ເຖິງ 1.096 ລ້ານໂດລາສະຫະລັດ, ລັດຖະບານມີລາຍຮັບຈາກຄ່າພາກຫຼວງ, ອາກອນກຳໄລ ແລະ ຄ່າທຳນຽມແຮ່ທາດ ໂດຍອີງຕາມສັນຍາສຳປະທານ 53,65 ລ້ານໂດລາສະຫະລັດ (ແຕ່ປີ 2016 ຫາ 2020 ລວມເປັນເງິນທັງໝົດ 233,33 ລ້ານໂດລາສະຫະລັດ, ໃນນີ້ຍັງບໍ່ມີອາ

ກອນກຳໄລຈາກໂຄງການໄຟຟ້າໄຟຟ້ານ້ຳງຽບ 1 ແລະ ໂຄງການເຊປຽນ-ເຊນ້ຳນ້ອຍ ເນື່ອງຈາກໄດ້ເລີ່ມຜະລິດໄຟຟ້າຂາຍຢ່າງເປັນທາງການ COD ໃນເດືອນ 09/2019 ແລະ 12/2019 ຕາມລຳດັບ).

ການດຳເນີນທຸລະກິດຂອງ ລຮລ ໃນປີ 2020 ເຖິງຈະພົບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ, ຍ້ອນຜົນກະທົບຈາກໄພທຳມະຊາດ ແລະ ການແຜ່ລະບາດຂອງພະຍາດ COVID-19 ເຮັດໃຫ້ການຜະລິດໄຟຟ້າໃນແຕ່ລະໂຄງການບໍ່ໄດ້ຕາມແຜນການທີ່ວາງໄວ້, ແຕ່ ລຮລ ກໍ່ໄດ້ສູ້ຊົນປະຕິບັດວຽກງານດ້ວຍຄວາມເອົາໃຈໃສ່ຢ່າງຕັ້ງໜ້າ, ສາມາດສ້າງລາຍຮັບ, ມອບພັນທະອາກອນຕ່າງໆໃຫ້ລັດ, ມີກຳໄລ ແລະ ບໍລິຫານສັນຍາເງິນກູ້ຢືມໄດ້ຢ່າງຄົບຖ້ວນ. ລຮລ ມີລາຍຮັບ 26,25 ລ້ານໂດລາສະຫະລັດ, ໃນນັ້ນ ໄດ້ຈາກເງິນປັນຜົນໂຄງການໄຟຟ້ານ້ຳເທີນ 2, ໂຄງການໄຟຟ້າຄວາມຮ້ອນຫົງສາ, ການຂາຍຂີ້ເທົ່າລອຍ, ການສະໜອງບຸກຄະລາກອນໃຫ້ບັນດາໂຄງການທີ່ ລຮລ ຮ່ວມຖືຮຸ້ນ ແລະ ລາຍຮັບອື່ນໆອີກຈຳນວນໜຶ່ງ. ມີກຳໄລ 3,03 ລ້ານໂດລາສະຫະລັດ (ແຕ່ປີ 2016 ຫາ 2020 ມີລາຍຮັບທັງໝົດ 188,53 ລ້ານໂດລາສະຫະລັດ, ກຳໄລ 56,94 ລ້ານໂດລາສະຫະລັດ, ຊຶ່ງເປັນການປະກອບສ່ວນສ້າງລາຍຮັບໃຫ້ລັດຖະບານໄດ້ຫຼາຍສົມຄວນ). ລຮລໄດ້ປະຕິບັດພັນທະຂອງຕົນຢ່າງຄົບຖ້ວນຕາມລະບຽບກົດໝາຍໂດຍໄດ້ມອບອາກອນກຳໄລລ່ວງໜ້າ, ອາກອນລາຍຮັບເງິນປັນຜົນ ແລະ ອາກອນອື່ນໆ, ຊຳລະຕົ້ນທຶນ ແລະ ດອກເບ້ຍຕາມສັນຍາກູ້ຢືມຕໍ່ໃຫ້ກະຊວງການເງິນ. ນອກຈາກນັ້ນ, ຍັງໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍຢ່າງຮັດກຸມ ແລະ ມີຄວາມໂປ່ງໃສຖືກຕ້ອງຕາມລະບຽບບັນຊີ-ການເງິນໂດຍມີການກວດສອບຈາກອົງການກວດສອບແຫ່ງລັດ, ບໍລິສັດກວດສອບສາກົນຈາກພາຍນອກລວມທັງການຕິດຕາມເອກະສານລາຍງານການເງິນຈາກຜູ້ສະໜອງທຶນແກ່ ລຮລ ຢ່າງເປັນປະຈຳ. ການຂາຍຂີ້ເທົ່າລອຍໄດ້ 172.247 ໂຕນ ເປັນເງິນ 635.575 ໂດລາສະຫະລັດ, ສ່ວນແຜນການຜະລິດຢິບຊຳເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກໄປຕ່າງປະເທດຂອງບໍລິສັດທີ່ໄດ້ເຊັນສັນຍາກັບ ລຮລ ຄາດວ່າຈະເລີ່ມໃນໄຕມາດທີ III/2021 ນີ້. ແຜນການໃນອະນາຄົດ ລຮລ ຍັງມີໂຄງການໃໝ່ໃນແຜນຮ່ວມພັດທະນາເຊັ່ນ: ໂຄງການໄຟຟ້າພະລັງງານຄວາມຮ້ອນຖ່ານຫີນບໍວລະພາ ແຂວງຄຳມ່ວນ ມີກຳລັງຕິດຕັ້ງ 2.000 MW ທີ່ບັນລຸການເຊັນສັນຍາສຳປະທານໃນວັນທີ 9 ມີນາ 2021, ໂຄງການໄຟຟ້າແສງຕາເວັນເທິງອ່າງເກັບນ້ຳໂຄງການນ້ຳເທີນ 2 ມີກຳລັງຕິດຕັ້ງ 240 MW ຢູ່ໃນຂັ້ນຕອນການເຈລະຈາສັນຍາພັດທະນາໂຄງການ ແລະ ເຂົ້າຮ່ວມໂຄງການອື່ນໆຕາມການມອບໝາຍຂອງລັດຖະບານ. ລຮລ ຈະສືບຕໍ່ປະຕິບັດວຽກງານຕາມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຕົນໃຫ້ດີທີ່ສຸດ ເພື່ອເປັນຫົວໜ່ວຍທຸລະກິດໜຶ່ງຂອງລັດທີ່ມີຄວາມເຂັ້ມແຂງ, ປະກອບສ່ວນສ້າງລາຍຮັບທີ່ໝັ້ນຄົງເຂົ້າງົບປະມານລັດນັບມື້ຫຼາຍຂຶ້ນ ແລະ ເພື່ອເຮັດໃຫ້ຖານະບົດບາດຂອງ ລຮລ ໃນການດຳເນີນທຸລະກິດນັບມື້ນັບສູງຂຶ້ນເປັນກ້າວໆຢ່າງໜັກແໜ້ນຕາມ 5 ວິໄສທັດໃນການບໍລິຫານທີ່ວາງໄວ້ຄື: ລົງທຶນຢ່າງມີປະສິດທິຜົນ; ສ້າງຜົນກຳໄລໃຫ້ໄດ້ຫຼາຍ; ສ້າງຄວາມເຊື່ອຖືຈາກສະຖາບັນການເງິນສາກົນ ແລະ ຜູ້ສະໜອງທຶນ; ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນຢ່າງຕໍ່

ເບື່ອງ; ບໍລິຫານລາຍຮັບ ແລະ ລາຍຈ່າຍຢ່າງໂປ່ງໃສ.

ສະຫຼຸບແລ້ວ, ການດຳເນີນທຸລະກິດຂອງ ລຣລ ໃນໄລຍະ 1 ປີຜ່ານມາ ແມ່ນໄດ້ຮັບຜົນສຳເລັດດີ. ໝາກຜົນທີ່ບັນລຸໄດ້ແມ່ນຍ້ອນມີການຊີ້ນຳ-ນຳພາອັນສະຫຼາດສ່ອງໃສຂອງພັກ ແລະ ລັດຖະບານ ໂດຍສະເພາະແມ່ນການຊີ້ນຳຢ່າງໃກ້ຊິດຈາກການນຳກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ ແລະ ສະພາບໍລິຫານຂອງ ລຣລ ທີ່ຍາມໃດກໍ່ມີຄວາມເປັນຫ່ວງເປັນໃຍ, ເອົາໃຈໃສ່ຕິດຕາມຊຸກຍູ້ ແລະ ສະໜັບສະໜູນການປະຕິບັດວຽກງານຂອງ ລຣລ ສົມທົບກັບການທຸ່ມເທເຫື່ອແຮງ, ຄວາມບຸກບືນທ້າວຫັນ, ຄວາມສາມັກຄີເປັນປຶກແຜ່ນຂອງພະນັກງານທັງໝົດ ໃນການປະຕິບັດໜ້າທີ່ການເມືອງ ອັນມີກຽດທີ່ພັກ ແລະ ລັດຖະບານມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ.

**ຜູ້ອຳນວຍການ**



**ມານະສິນ ວົງໄຊ**


ລັດວິສາຫະກິດ
ຖືຮຸ້ນລາວ
LAO HOLDING
STATE ENTERPRISE
www.laoholding.com
SHB
Solid partners, flexible solutions
ລຮລ
LHSE
LAO HOLDING STATE ENTERPRISE

# ພາລະບົດບາດ, ໜ້າທີ່, ວິໄສທັດ, ນະໂຍບາຍລວມ ແລະ ກົງຈັກການຈັດຕັ້ງຂອງ ລຮລ

## 1. ພາລະບົດບາດ ແລະ ໜ້າທີ່

ລັດວິສາຫະກິດຖືຮຸ້ນລາວ (ລຮລ) ສ້າງຕັ້ງຂຶ້ນໃນວັນທີ 23 ກຸມພາ 2005 ເປັນຫົວໜ່ວຍທຸລະກິດໜຶ່ງທີ່ຂຶ້ນກັບກະຊວງພະລັງງານ ແລະ ບໍ່ແຮ່, ຊຶ່ງແມ່ນກະຊວງການເງິນເປັນເຈົ້າຂອງທຶນ 100% ເພື່ອເຂົ້າຮ່ວມຖືຮຸ້ນ, ຄຸ້ມຄອງ ແລະ ບໍລິຫານຮຸ້ນຂອງລັດຖະບານຢູ່ໃນບັນດາໂຄງການຜະລິດໄຟຟ້າເພື່ອການສົ່ງອອກຢ່າງມີປະສິດທິຜົນ ແລະ ເກີດຜົນຕອບແທນສູງສຸດ.

ໃນປະຈຸບັນ ລຮລ ຕາງໜ້າໃຫ້ລັດຖະບານ ຮ່ວມລົງທຶນໃນ 4 ໂຄງການຄື: ໂຄງການໄຟຟ້ານໍ້າເທີນ 2 (ຖືຮຸ້ນ 25%); ໂຄງການໄຟຟ້າຄວາມຮ້ອນຫົງສາ (ຖືຮຸ້ນພາກໂຮງໄຟຟ້າ 20% ແລະ ພາກບໍ່ແຮ່ 25%), ໂຄງການໄຟຟ້າເຊປຽນ-ເຊນໍ້ານ້ອຍ (ຖືຮຸ້ນ 24%) ແລະ ໂຄງການໄຟຟ້ານໍ້າງຽບ 1 (ຖືຮຸ້ນ 25%). ລວມກຳລັງຕິດຕັ້ງທັງໝົດປະມານ 3.658 ເມກາວັດ (MW) ແລະ ຜະລິດພະລັງງານໄດ້ປະມານ 21.551 ລ້ານກິໂລວັດໂມງ (KWh) ຕໍ່ປີ, ມີມູນຄ່າການລົງທຶນ 7.063 ລ້ານໂດລາສະຫະລັດ. ໃນນັ້ນ, ທຶນຮຸ້ນຂອງ ລຮລ 536,64 ລ້ານໂດລາສະຫະລັດ. ພ້ອມດຽວກັນນີ້, ລຮລ ຍັງຖືກມອບໝາຍໃຫ້ດຳເນີນທຸລະກິດຂີ້ເທົ່າລອຍ ແລະ ຍິບຊຳທີ່ເກີດຈາກຂະບວນການເຜົາໄໝ້ຖ່ານຫີນ ເພື່ອຜະລິດກະແສໄຟຟ້າໃນໂຄງການໄຟຟ້າຄວາມຮ້ອນຫົງສາ.

### ຕາຕະລາງອັດຕາສ່ວນການຖືຮຸ້ນ ແລະ ມູນຄ່າການລົງທຶນຂອງ ລຮລ ໃນ 4 ໂຄງການ

| ໂຄງການ | ຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ | ກຳລັງຕິດຕັ້ງ (MW) | ການຜະລິດຕໍ່ປີ (GWh/Y) | ມູນຄ່າໂຄງການ (ລ້ານ USD) | ອັດຕາສ່ວນເງິນກູ້ຕໍ່ທຶນຮຸ້ນ (%) | ມູນຄ່າການລົງທຶນຂອງ ລຮລ (ລ້ານ USD) | ແຫຼ່ງທຶນຮຸ້ນຂອງ ລຮລ |
|---|---|---|---|---|---|---|---|
| ນໍ້າເທີນ 2 | EDFI (ຝຣັ່ງ): 40%<br>EGCO (ໄທ): 35%<br>**ລຮລ: 25%** | 1.080 | 5.936 | 1.297 | 72/28 | 112,50 | 1) ADB; 2) AFD; 3) IDA; 4) EIB; 5) ລັດຖະບານແຫ່ງ ສປປ ລາວ |
| ຫົງສາ | <u>ພາກໂຮງໄຟຟ້າ:</u><br>BANPU (ໄທ): 40%<br>RH International (ສິງກະໂປ): 40%<br>**ລຮລ: 20%**<br><u>ພາກບໍ່ແຮ່:</u><br>BANPU (ໄທ): 37,50%<br>RH International (ສິງກະໂປ) 37,50%<br>**ລຮລ: 25%** | 1.878 | 12.200 | 3.710 | 75/25 | 220 | 1) ທະນາຄານກຸງໄທ (KTB)<br>2) ທະນາຄານອອມສິນ (GSB) |
| ເຊປຽນ-ເຊນໍ້ານ້ອຍ | SK (ເກົາຫຼີ): 26%<br>KOWEPO (ເກົາຫຼີ): 25%<br>RATCH (ໄທ): 25%<br>**ລຮລ: 24%** | 410 | 1.823 | 1.090 | 70/30 | 100,64 | 1) ທະນາຄານກຸງໄທ (KTB)<br>2) ກອງທຶນຮ່ວມມື ເພື່ອພັດທະນາດ້ານເສດຖະກິດ ສ. ເກົາຫຼີ (EDCF) |
| ນໍ້າງຽບ 1 | KPIC Netherland B.V. (Kansai) (ຍີ່ປຸ່ນ): 45%<br>EGAT Inter. (ໄທ): 30%<br>**ລຮລ: 25%** | 290 | 1.592 | 966 | 71/29 | 103,50 | 1) ທະນາຄານຍີ່ປຸ່ນເພື່ອການຮ່ວມມືສາກົນ (JBIC)<br>2) ທະນາຄານເພື່ອການນຳເຂົ້າ-ສົ່ງອອກປະເທດໄທ (Thai EXIM)<br>3) ທະນາຄານກຸງເທບ (Bangkok Bank) |
| **ລວມ** | | **3 .658** | **21.551** | **7.063** | | **536,64** | |

ລຮລ ມີພາລະບົດບາດ ແລະ ໜ້າທີ່ຕົ້ນຕໍໃນການເຂົ້າຮ່ວມລົງທຶນ ເພື່ອພັດທະນາບັນດາໂຄງການໄຟຟ້າ ແລະ ຂົນຂວາຍແຫຼ່ງທຶນມາປະກອບເປັນເງິນຮຸ້ນຂອງຕົນໃນບັນດາໂຄງການດັ່ງກ່າວ, ຄຸ້ມຄອງບໍລິຫານບໍລິສັດໂຄງການຮ່ວມກັບຂາຮຸ້ນຕ່າງປະເທດ ໂດຍຜ່ານກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມສະພາບໍລິຫານ, ຄົ້ນຄວ້າປຶກສາຫາລືກ່ຽວກັບການພັດທະນາໂຄງການ ເພື່ອປະຕິບັດໃຫ້ສອດຄ່ອງກັບແຜນຍຸດທະສາດຂອງລັດຖະບານໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຖືກຕ້ອງກັບສັນຍາຕ່າງໆທີ່ໄດ້ລົງນາມຮ່ວມກັບລັດຖະບານ, ຮັບປະກັນການລົງທຶນທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ. ລຮລ ມີໜ້າທີ່ໃນການເຈລະຈາ ແລະ ບໍລິຫານບັນດາສັນຍາຕ່າງໆຂອງໂຄງການ ໂດຍສະເພາະແມ່ນສັນຍາຜູ້ຖືຮຸ້ນ ແລະ ສັນຍາຜູກພັນດ້ານການເງິນການສະໜອງທຶນ, ຄຸ້ມຄອງບໍລິຫານໜີ້ເງິນກູ້ ແລະ ເງິນຮຸ້ນ, ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນ ໂດຍມີການກວດສອບຈາກບໍລິສັດກວດສອບພາຍນອກ ແລະ ການຕິດຕາມຈາກບັນດາສະຖາບັນການເງິນສາກົນຢ່າງເປັນປະຈຳ, ລວມທັງອີງການກວດສອບແຫ່ງລັດ, ຕິດຕາມການກໍ່ສ້າງໂຄງການ, ການຄຸ້ມຄອງດຳເນີນການຜະລິດ ແລະ ການບຳລຸງຮັກສາ, ເຂົ້າຮ່ວມວຽກງານກວດສອບພາຍໃນກັບບັນດາຂາຮຸ້ນ, ປະສານສົມທົບກັບບັນດາຂະແໜງການມະຫາພາກ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບໂຄງການ ໂດຍສະເພາະວຽກງານສິ່ງແວດລ້ອມ-ສັງຄົມ ແລະ ທັງການຍົກຍ້າຍຈັດສັນປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການ ແລະ ສະພາບການເຄື່ອນໄຫວທຸລະກິດຂອງ ລຮລ ໃຫ້ຂັ້ນເທິງໄດ້ຮັບຊາບ ແລະ ໃຫ້ທິດຊີ້ນຳໃນແຕ່ລະໄລຍະຢ່າງເປັນປົກກະຕິ. ນອກຈາກນັ້ນ, ລຮລ ຍັງມີໜ້າທີ່ໃນການດຳເນີນທຸລະກິດຂີ້ເທົ່າລອຍ ແລະ ຍິບຊຳຈາກໂຄງການໄຟຟ້າຄວາມຮ້ອນຫົງສາຕາມການມອບໝາຍຂອງລັດຖະບານ.



## 2. ວິໄສທັດ

1. ລົງທຶນຢ່າງມີປະສິດທິຜົນ
   Efficient Investment
2. ສ້າງຜົນກຳໄລໃຫ້ໄດ້ຫຼາຍ
   Profit Making
3. ສ້າງຄວາມເຊື່ອຖືຈາກສະຖາບັນການເງິນສາກົນ ແລະ ຜູ້ສະໜອງທຶນ
   Gaining Credibility
4. ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນຢ່າງຕໍ່ເນື່ອງ
   Capacity Building
5. ບໍລິຫານລາຍຮັບ ແລະ ລາຍຈ່າຍຢ່າງໂປ່ງໃສ
   Transparency in Management of Revenue and Expenditure

## 3. ນະໂຍບາຍລວມຂອງ ລຮລ

ລຮລ: ຕ້ອງເຕີບໃຫຍ່ເຂັ້ມແຂງ

ເພື່ອເປັນກຳລັງແຮງ ທຸລະກິດຂອງລັດ

ສ້າງລາຍຮັບໝັ້ນຄົງ ສ້າງກຳໄລຍືນຍົງ

ສົ່ງມອບລັດຖະບານ



## 4. ກົງຈັກການຈັດຕັ້ງຂອງ ລຮລ

ລຮລ ມີສະພາບໍລິຫານ, ຄະນະອຳນວຍການ, ພະແນກບໍລິຫານ ແລະ ບັນຊີ-ການເງິນ, ພະແນກທຸລະກິດ-ແຜນການ, ພະແນກໂຄງການ, ພະແນກທຸລະກິດຊື້ເທົ່າລອຍ ແລະ ຫ້ອງການກວດສອບພາຍໃນ, ຕາມແຜນວາດຂ້າງລຸ່ມນີ້:



## ❖ ສະພາບໍລິຫານຂອງ ລຮລ

ສະພາບໍລິຫານປະກອບມີ 5 ທ່ານທີ່ຕາງໜ້າໃຫ້ຂະແໜງການກ່ຽວຂ້ອງຄື: ປະທານສະພາບໍລິຫານມາຈາກກະຊວງການເງິນ, ຮອງປະທານສະພາບໍລິຫານມາຈາກກະຊວງພະລັງງານ ແລະ ບໍ່ແຮ່, ກຳມະການສະພາບໍລິຫານ 3 ທ່ານ (ກະຊວງແຜນການ ແລະ ການລົງທຶນ 1 ທ່ານ ແລະ ລຮລ 2 ທ່ານ).

**ຄະນະສະພາບໍລິຫານ ລຮລ**



**ທ່ານ ພູເຂົາຄຳ ວັນນະວົງໄຊ**
**ປະທານສະພາບໍລິຫານ**
ຫົວໜ້າກົມພາສີ, ກະຊວງການເງິນ



**ທ່ານ ສົມພິດ ແກ້ວວິຈິດ**
**ຮອງປະທານສະພາບໍລິຫານ**
ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່



**ທ່ານ ນາງ ທຳມາ ເພັດວິໄຊ**
**ກຳມະການສະພາບໍລິຫານ**
ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຜນການ ແລະ ການລົງທຶນ



**ທ່ານ ມານະສິນ ວົງໄຊ**
**ກຳມະການສະພາບໍລິຫານ**
ຜູ້ອຳນວຍການ ລຮລ



**ທ່ານ ສົມສັກ ສີຊົມພູ**
**ກຳມະການສະພາບໍລິຫານ**
ຕົວແທນພະນັກງານ ລຮລ

## ❖ ຄະນະອຳນວຍການ ແລະ ບຸກຄະລາກອນຂອງ ລຣລ



**ທ່ານ ມານະສິນ ວົງໄຊ**
ຜູ້ອຳນວຍການ



**ທ່ານ ບົວລິດ ຂຸນສີ**
ຮອງຜູ້ອຳນວຍການ



**ທ່ານ ອຸໄທ ພົດສະວົງ**
ຮອງຜູ້ອຳນວຍການ



**ທ່ານ ໄມເພັດ ພົນພິລາ**
ຮອງຜູ້ອຳນວຍການ

ໃນທ້າຍປີ 2020 ລຣລ ມີພະນັກງານທັງໝົດ 112 ຄົນ (ຍິງ 32 ຄົນ), ໃນນີ້ປະຈຳຢູ່ ນະຄອນຫຼວງວຽງຈັນ 64 ຄົນ, 1 ຄົນເຮັດວຽກໃນຕຳແໜ່ງຄະນະອຳນວຍການຂອງບໍລິສັດໄຟຟ້າເຊປຽນ-ເຊນ້ຳນ້ອຍ, 8 ຄົນເປັນພະນັກງານຄຸ້ມຄອງ ແລະ ບັນຊາເຂື່ອນໄຟຟ້ານ້ຳເທີນ 2, ເຮັດວຽກກັບບໍລິສັດໄຟຟ້າຫົງສາ 4 ຄົນ ແລະ ປະຈຳການຢູ່ຫ້ອງການຂີ້ເທົ່າລອຍພາກສະໜາມເມືອງຫົງສາ ແຂວງໄຊຍະບູລີ 35 ຄົນ.

**ການຂະຫຍາຍຕົວຂອງພະນັກງານ ລຣລ (ແຕ່ປີ 2005-2020)**



# ເຫດການເດັ່ນປີ 2020

ພະນະທ່ານ ປອ. ທອງລຸນ ສີສຸລິດ ນາຍົກລັດຖະມົນຕີ ຢ້ຽມຢາມໂຄງການໄຟຟ້າຄວາມຮ້ອນຫົງສາ
(05/03/2020)



ທ່ານ ປອ. ບຸນທອງ ຈິດມະນີ ຮອງນາຍົກລັດຖະມົນຕີປະທານອົງການກວດກາລັດຖະບານ ຕິດຕາມກວດກາຟື້ນຟູໄພພິບັດ ຢູ່ເມືອງສະໜາມໄຊ
(29/07/2020)



ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ຢ້ຽມຢາມໂຄງການໄຟຟ້າຄວາມຮ້ອນຫົງສາ
(14/01/2020)



ທ່ານ ປອ. ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ ຢ້ຽມຢາມໂຄງການໄຟຟ້າຄວາມຮ້ອນຫົງສາ
(05/06/2020)



ທ່ານ ປອ. ຄຳມະນີ ອິນທິລາດ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ຢ້ຽມຢາມປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຢູ່ເມືອງສະໜາມໄຊ ແຂວງອັດຕະປື

(16/05/2020)



ທ່ານ ທອງພັດ ອິນທະວົງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ພ້ອມດ້ວຍຄະນະ ຢ້ຽມຢາມໂຄງການໄຟຟ້າຄວາມຮ້ອນຫົງສາ

(11/08/2020)



ທ່ານ ປອ. ສີນາວາ ສຸພານຸວົງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ຢ້ຽມຢາມໂຄງການໄຟຟ້ານ້ຳງຽບ 1

(06/07/2020)




ກອງປະຊຸມຄະນະກຳມະການຊີ້ນຳໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ຄັ້ງທີ X

(18/05/2020)



NTPC ລາຍງານຄວາມຄືບໜ້າໂຄງການໄຟຟ້າແສງຕາເວັນເທິງອ່າງນ້ຳເທີນ 2 ທີ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

(16/07/2020)



ພິທີເຊັນສັນຍາການສະໜອງຂີ້ເທົ່າລອຍ ເພື່ອປະກອບສ່ວນເຂົ້າໃນໂຄງການກໍ່ສ້າງທາງຮ່ອມເບຕົງຢູ່ບັນດາເມືອງ ແຂວງໄຊຍະບູລີ

(27/07/2020)




ພິທີເຊັນສັນຍາຊື້-ຂາຍຢິບຊຳລະຫວ່າງ ລຮລ ກັບບໍລິສັດກັບລູກຄ້າ



ການເຊັນບົດບັນທຶກການຮ່ວມມືພັດທະນາໂຄງການໄຟຟ້າຄວາມຮ້ອນຖ່ານຫີນບົວລະພາ ແຂວງຄຳມ່ວນ

(13/12/2019)



**ລາຍຮັບ: 26.249.505 ໂດລາສະຫະລັດ:**

1. ເງິນປັນຜົນໂຄງການນ້ຳເທີນ 2 ຈຳນວນ 15.000.000 ໂດລາສະຫະລັດ.
2. ເງິນປັນຜົນໂຄງການໄຟຟ້າຄວາມຮ້ອນຫົງສາ 10.403.132 ໂດລາສະຫະລັດ:
   - ພາກໄຟຟ້າ: 6.597.263 ໂດລາສະຫະລັດ.
   - ພາກບໍ່ແຮ່: 3.805.869 ໂດລາສະຫະລັດ.
3. ລາຍຮັບຂາຍຂີ້ເທົ່າລອຍ 635.575 ໂດລາສະຫະລັດ.
4. ລາຍຮັບຂາຍຍິບຊຳ 6.877 ໂດລາສະຫະລັດ.
5. ການສະໜອງບຸກຄະລາກອນໃຫ້ບໍລິສັດໂຄງການ 168.739 ໂດລາສະຫະລັດ.
6. ລາຍຮັບອື່ນໆ 35.182 ໂດລາສະຫະລັດ.



**ຈ່າຍຊຳລະຕົ້ນທຶນ-ດອກເບ້ຍເງິນກູ້ 30.826.168 ໂດລາສະຫະລັດ:**

1. ໂຄງການໄຟຟ້ານ້ຳເທີນ 2 ຈຳນວນ 6.250.922 ໂດລາສະຫະລັດ.
2. ໂຄງການໄຟຟ້າຄວາມຮ້ອນຫົງສາ 16.876.841 ໂດລາສະຫະລັດ.
3. ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ 273.254 ໂດລາສະຫະລັດ.
4. ໂຄງການໄຟຟ້ານ້ຳງຽບ 1 ຈຳນວນ 7.425.151 ໂດລາສະຫະລັດ.



**ມອບພັນທະ 599.126 ໂດລາສະຫະລັດ:**

1. ອາກອນເງິນປັນຜົນ 196.432 ໂດລາສະຫະລັດ.
2. ອາກອນກຳໄລ 215.285 ໂດລາສະຫະລັດ.
3. ອາກອນອື່ນໆ 187.409 ໂດລາສາຫະລັດ.



## ການລົງທຶນ ແລະ ຜົນການດຳເນີນທຸລະກິດຂອງ ລຮລ

### ❖ ການລົງທຶນ

ນັບແຕ່ປີ 2016-2020 ລຮລ ໄດ້ຖອນເງິນກູ້ຢືມເພື່ອມາຖອກເປັນທຶນຮຸ້ນ ແລະ ຄ່າທຳນຽມຕ່າງໆ 184,54 ລ້ານໂດລາສະຫະລັດ. ໃນນັ້ນ, ຖອກເປັນທຶນຮຸ້ນພື້ນຖານ 163,04 ລ້ານໂດລາສະຫະລັດ. ຊຳລະດອກເບັ້ຍໃນໄລຍະກໍ່ສ້າງ ແລະ ຄ່າທຳນຽມຕ່າງໆ 21,50 ລ້ານໂດລາສະຫະລັດ.

#### ຕາຕະລາງທຶນຮຸ້ນຂອງ ລຮລ ໃນແຕ່ລະໂຄງການ

*(ຫົວໜ່ວຍ ລ້ານໂດລາສະຫະລັດ)*

| ຊື່ໂຄງການ | ລຮລ ຖືຮຸ້ນ (%) | ຍອດສະສົມຮອດ 31/12/2019 | ເຄື່ອນໄຫວໃນປີ 2020 | | ຍອດສະສົມຮອດ 31/12/2020 |
|---|---|---|---|---|---|
| | | | +ຖອກເພີ່ມ | -ຖອນອອກ | |
| ນ້ຳເທີນ 2 | 25 | 93,37 | 0 | 0 | 93,37 |
| ຫົງສາ (ໄຟຟ້າ) | 20 | 185,40 | 0 | 0 | 185,40 |
| ຫົງສາ (ບໍ່ແຮ່) | 25 | 0,01 | 0 | 0 | 0,01 |
| ນ້ຳງຽບ 1 | 25 | 78,50 | 0 | 0 | 78,50 |
| ເຊປຽນ-ເຊນ້ຳນ້ອຍ | 24 | 73,44 | 0 | 0 | 73,44 |
| ລວມ | | 430,72 | 0 | 0 | 430,72 |

***ໝາຍເຫດ:*** *ລຮລ ໄດ້ສຳເລັດການຖອກທຶນຮຸ້ນຂອງຕົນເຂົ້າໃນແຕ່ລະໂຄງການຄົບຖ້ວນແລ້ວ.*

#### ການຖອກທຶນຮຸ້ນຂອງ ລຮລ (ແຕ່ປີ 2016-2020)




ນອກຈາກນີ້, ຍັງໄດ້ລົງທຶນເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງເພື່ອຮອງຮັບການດຳເນີນທຸລະກິດຂີ້ເທົ່າລອຍ ຈຳນວນ 13,30 ລ້ານໂດລາສະຫະລັດ.

❖ **ຜົນປະກອບການທາງດ້ານທຸລະກິດ:** ໃນປີ 2020 ຜ່ານມາ ການດຳເນີນທຸລະກິດຂອງ ລຮລ ແມ່ນພົບຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ, ແຕ່ ລຮລ ກໍ່ໄດ້ສູ້ຊົນປະຕິບັດວຽກງານດ້ວຍຄວາມເອົາໃຈໃສ່ຢ່າງຕັ້ງໜ້າ, ສາມາດສ້າງລາຍຮັບ, ມີກຳໄລ, ມອບພັນທະອາກອນຕ່າງໆໃຫ້ລັດ ແລະ ບໍລິຫານສັນຍາເງິນກູ້ຢືມ (ຖອນເງິນກູ້, ຖອກຮຸ້ນ, ຈ່າຍຊຳລະຕົ້ນທຶນ ແລະ ດອກເບ້ຍ) ໄດ້ຄົບຖ້ວນ, ໂດຍມີລາຍຮັບ 26.249.505 ໂດລາສະຫະລັດ ແລະ ມີຜົນກຳໄລ 3.034.489 ໂດລາສະຫະລັດ. ລວມລາຍຮັບໃນໄລຍະ 5 ປີ (2016-2020) ມີທັງໝົດ 188.530.141 ໂດລາສະຫະລັດ ແລະ ມີຜົນກຳໄລ 56.940.766 ໂດລາສະຫະລັດ.

**ໂຄງການໄຟຟ້ານ້ຳເທີນ 2:** ລຮລ ໄດ້ຮັບເງິນປັນຜົນ 15.000.000 ໂດລາສະຫະລັດ ໃນນັ້ນ ໄດ້ຊຳລະຕົ້ນທຶນ-ດອກເບ້ຍໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ 6.250.922 ໂດລາສະຫະລັດ. ໃນໄລຍະ 5 ປີ (2016-2020) ລຮລ ໄດ້ຮັບເງິນປັນຜົນທັງໝົດ 75.250.000 ໂດລາສະຫະລັດ, ໄດ້ຈ່າຍອາກອນເງິນປັນຜົນ 5.979.576 ໂດລາສະຫະລັດ ແລະ ຊຳລະຕົ້ນທຶນ-ດອກເບ້ຍ 29.045.000 ໂດລາສະຫະລັດ.

**ໂຄງການໄຟຟ້າຄວາມຮ້ອນຫົງສາ:** ລຮລ ມີລາຍຮັບຈາກເງິນປັນຜົນ 10.403.132 ໂດລາສະຫະລັດ, ຊຶ່ງໄດ້ຈາກພາກໂຮງໄຟຟ້າ 6.597.263 ໂດລາສະຫະລັດ ແລະ ຈາກພາກບໍ່ແຮ່ 3.805.869 ໂດລາສະຫະລັດ; ໃນນັ້ນ ໄດ້ຈ່າຍອາກອນເງິນປັນຜົນພາກບໍ່ແຮ່ 196.432 ໂດລາສະຫະລັດ ແລະ ຊຳລະຕົ້ນທຶນ-ດອກເບ້ຍໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ 16.876.841 ໂດລາສະຫະລັດ. ໃນໄລຍະ 5 ປີ (2016-2020) ລຮລ ໄດ້ຮັບເງິນປັນຜົນທັງໝົດ 107.153.558 ໂດລາສະຫະລັດ, ຊຶ່ງໄດ້ຈາກພາກໂຮງໄຟຟ້າ 89.789.359 ໂດລາສະຫະລັດ ແລະ ຈາກພາກບໍ່ແຮ່ 17.364.199 ໂດລາສະຫະລັດ, ໄດ້ຈ່າຍອາກອນເງິນປັນຜົນ 9.126.726 ໂດລາສະຫະລັດ ແລະ ຊຳລະຕົ້ນທຶນ-ດອກເບ້ຍ 116.094.313 ໂດລາສະຫະລັດ.

**ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ:** ໂຄງການນີ້ເລີ່ມການຜະລິດໃນວັນທີ 06/12/2019, ລຮລ ຍັງໄດ້ຊຳລະຕົ້ນທຶນ-ດອກເບ້ຍ ພ້ອມທັງຄ່າທຳນຽມຕ່າງໆ ຂອງເງິນກູ້ໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ 273.254 ໂດລາສະຫະລັດ.

**ໂຄງການໄຟຟ້ານ້ຳງຽບ 1:** ໂຄງການເລີ່ມການຜະລິດໃນວັນທີ 05/09/2019, ລຮລ ໄດ້ຊຳລະຕົ້ນທຶນ-ດອກເບ້ຍ ພ້ອມທັງຄ່າທຳນຽມຕ່າງໆ ຂອງເງິນກູ້ໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ ຈຳນວນ 7.425.151 ໂດລາສະຫະລັດ.

**ທຸລະກິດຂີ້ເທົ່າລອຍ:** ລຮລ ມີສັນຍາຊື້-ຂາຍຂີ້ເທົ່າລອຍກັບ 06 ບໍລິສັດ. ປີ 2020 ໄດ້ຂາຍຂີ້ເທົ່າລອຍທັງໝົດ 172.247 ໂຕນ ເປັນເງິນ 635.575 ໂດລາສະຫະລັດ. ແຕ່ທ້າຍປີ 2016 ຮອດທ້າຍປີ 2020 ຂາຍໄດ້ທັງໝົດ 969.888 ໂຕນ ເປັນເງິນ 3.983.195 ໂດລາສະຫະລັດ.

**ທຸລະກິດຍິບຊຳ:** ພາຍຫຼັງທີ່ ໄດ້ຮັບມອບໝາຍຈາກລັດຖະບານໃນປີ 2019. ລຮລ ໄດ້ເລີ່ມຂາຍຍິບຊຳແຕ່ເດືອນ 07-12/2020 ໄດ້ທັງໝົດ 2.735,53 ໂຕນ ເປັນເງິນ 6.877 ໂດລາສະຫະລັດ.

# ການຈັດຕັ້ງປະຕິບັດຂອງບັນດາໂຄງການທີ່ ລຮລ ຮ່ວມທຶນ




## ໂຄງການໄຟຟ້ານ້ຳເທີນ 2

ໂຄງການໄຟຟ້ານ້ຳເທີນ 2 ຕັ້ງຢູ່ເມືອງນາກາຍ (ເຂື່ອນໃຫຍ່) ແລະ ເມືອງຍົມມະລາດ (ໂຮງຈັກໄຟຟ້າ) ແຂວງຄຳມ່ວນ, ລວມກຳລັງຕິດຕັ້ງທັງໝົດ 1.080 MW ແລະ ມີມູນຄ່າການກໍ່ສ້າງໂຄງການທັງໝົດ 1.297 ລ້ານໂດລາສະຫະລັດ. ໂຄງການໄດ້ສຳເລັດການກໍ່ສ້າງ ແລະ ເລີ່ມຜະລິດກະແສໄຟຟ້າຂາຍຢ່າງເປັນທາງການໃນວັນທີ 30/04/2010.

**ເຂື່ອນໃຫຍ່ນາກາຍ**



ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ ປະກອບດ້ວຍ 3 ຂາຮຸ້ນຄື: ບໍລິສັດໄຟຟ້າຝຣັ່ງຖືຮຸ້ນນ້ຳເທີນ (EDF NTH), ບໍລິສັດຜະລິດໄຟຟ້າຈຳກັດມະຫາຊົນ (EGCO) ແລະ ລັດວິສາຫະກິດຖືຮຸ້ນລາວ (LHSE).

## ບັນດາຂາຮຸ້ນໃນໂຄງການ




ການຜະລິດໄຟຟ້າຂອງໂຄງການໃນປີ 2020 ນີ້ແມ່ນບໍ່ບັນລຸຕາມແຜນການທີ່ໄດ້ກຳນົດໄວ້ ເນື່ອງຈາກຜົນກະທົບທາງທຳມະຊາດ, ພະຍາດໂຄວິດ COVID-19 ແລະ ມີການຢຸດການຜະລິດຕາມແຜນບຳລຸງຮັກສາສ້ອມແປງປະຈຳປີ, ໃນຕົ້ນເດືອນ 02/2020 ບໍລິສັດໄຟຟ້ານ້ຳເທີນ 2 ໄດ້ດຳເນີນການສ້ອມແປງໃຫຍ່ຈັກ Francis ເບີ 4, ກວດກາສ້ອມແປງແກ້ໄຂຈຸດຮົ່ວຈາກຄອງສົ່ງນ້ຳທ້າຍໂຮງຈັກໄຟຟ້າ. ການຜະລິດໄຟຟ້າໄດ້ 4.953 GWh ເທົ່າກັບ 81,27% ຂອງແຜນປີເປັນເງິນ 244.367.218 ໂດລາສະຫະລັດ. ໃນນັ້ນ, ຂາຍໃຫ້ ກຟຜ ຈຳນວນ 4.560 GWh ເປັນເງິນ 226.653.434 ໂດລາສະຫະລັດ ແລະ ຂາຍໃຫ້ ຟຟລ 393 GWh ເປັນເງິນ 17.713.784 ໂດລາສະຫະລັດ.

### ພະລັງງານໄຟຟ້າຂາຍໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2010 ຫາ 2020)



## ລາຍຮັບຈາກການຂາຍພະລັງງານໄຟຟ້າໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2010 ຫາ 2020)




ໃນປີ 2020 ລັດຖະບານໄດ້ຮັບເງິນຄ່າພາກຫຼວງ ຈຳນວນ 13.557.763 ໂດລາສະຫະລັດ ແລະ ຈາກອາກອນກຳໄລ 5.522.613 ໂດລາສະຫະລັດ ຈາກບໍລິສັດໄຟຟ້ານ້ຳເທີນ 2.



ພາຍຫຼັງສິ້ນສຸດການຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນໃນປີ 2018, ບໍລິສັດໄຟຟ້ານ້ຳເທີນ 2 ໄດ້ສືບຕໍ່ພັດທະນາຊີວິດການເປັນຢູ່ຂອງຊຸມຊົນໃນເຂດພື້ນທີ່ໂຄງການ ເພື່ອຕອບສະໜອງ 2 ຈຸດປະສົງຄື: 1) ສະໜັບສະໜູນເມືອງໃນການຈັດຕັ້ງປະຕິບັດໄປຕາມທິດສາມສ້າງຂອງລັດຖະບານ ແລະ 2) ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດໄຟຟ້ານ້ຳເທີນ 2. ນອກຈາກນີ້, ໂຄງການຍັງໄດ້ພັດທະນາຊີວິດການເປັນຢູ່ຂອງຊຸມຊົນໃນເຂດພື້ນທີ່ໃກ້ກັບໂຄງການໄດ້ແບ່ງອອກເປັນ 3 ເຂດໃຫຍ່ເຊັ່ນ: ເຂດອຸທິຍານແຫ່ງຊາດນາກາຍນ້ຳເທີນ, ເຂດພູພຽງນາກາຍ ແລະ ເຂດລຸ່ມເຊືອນຈັກ. ເຂດອຸທິຍານແຫ່ງຊາດແມ່ນພັດທະນາໂດຍການສະໜອງທຶນໃຫ້ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນ້ຳເທີນ 2 ຈັດຕັ້ງປະຕິບັດເປັນປະຈຳທຸກໆປີຈົນສິ້ນສຸດໄລຍະສຳປະທານໂຄງການ ປີ 2035; ເຂດພູພຽງນາກາຍແມ່ນໄດ້ມີການພັດທະນາຊີວິດການເປັນຢູ່ຂອງຊຸມຊົນ ໂດຍຜ່ານກອງທຶນປົວແປງສິ່ງແວດລ້ອມ-ສັງຄົມ ແລະ ກອງທຶນພັດທະນານ້ຳເທີນ 2 ພາຍໃຕ້ຫົວຂໍ້ເຫຼົ່ານີ້: ການພັດທະນາເສດຖະກິດ ແລະ ຊີວິດການເປັນຢູ່, ໄພພິບັດທາງທຳມະຊາດ, ການສຶກສາ ແລະ ສຸຂະພາບ ແລະ ເຂດລຸ່ມເຊືອນຈັກແມ່ນສະໜອງງົບປະມານເປັນແຕ່ລະໂຄງການ ໂດຍເນັ້ນໜັກໃສ່ການຊຸກຍູ້ການຊົມໃຊ້ນ້ຳເຂດລຸ່ມເຊືອນຈັກໃຫ້ເກີດຜົນປະໂຫຍດຫຼາຍທີ່ສຸດ.

### ກິດຈະກຳຕ່າງໆກ່ຽວກັບການສ້າງວຽກເຮັດງານທຳຂອງປະຊາຊົນພາຍຫຼັງມີໂຄງການ



## ໂຄງການໄຟຟ້າຄວາມຮ້ອນຫົງສາ

ໂຄງການໄຟຟ້າຄວາມຮ້ອນຫົງສາ ຕັ້ງຢູ່ເມືອງຫົງສາ ແຂວງໄຊຍະບູລີ, ເປັນໂຄງການທີ່ຜະລິດໄຟຟ້າດ້ວຍຄວາມຮ້ອນໂດຍນຳໃຊ້ຖ່ານຫີນລິກໄນ (Lignite) ເປັນເຊື້ອໄຟ, ມີກຳລັງຕິດຕັ້ງ 1.878 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດ 3.710 ລ້ານໂດລາສະຫະລັດ.

ໂຮງໄຟຟ້າ



ການຂຸດຄົ້ນຖ່ານຫີນ



ບໍລິສັດໄຟຟ້າຫົງສາ ຈຳກັດ ປະກອບດ້ວຍ 3 ຂາຮຸ້ນຄື: ບໍລິສັດບ້ານປູ (BANPU) ປະເທດໄທ, ບໍລິສັດ ອາເອຊ ອິນເຕີເນຊັນແນວ (ສິງກະໂປ) ຄໍປໍເຣຊັນ ຈຳກັດ (RH International Singapore Corporation Pte, Ltd) ປະເທດໄທ ແລະ ລັດວິສາຫະກິດຖືຮຸ້ນລາວ.

### ບັນດາຂາຮຸ້ນໃນໂຄງການ




ໃນປີ 2020 ໂຄງການຜະລິດໄຟຟ້າໄດ້ຫຼຸດແຜນການເລັກນ້ອຍ ເນື່ອງຈາກໄດ້ຮັບຜົນກະທົບຈາກໄພທຳມະຊາດເຊັ່ນ: ແຜ່ນດິນໄຫວ, ຟ້າຜ່າສາຍສົ່ງ, ໄຟໄໝ້ປ່າຢູ່ກ້ອງແລວສາຍສົ່ງ ເຮັດໃຫ້ໄດ້ຢຸດການຜະລິດຫຼາຍວັນ ເພື່ອສ້ອມແປງເຄື່ອງຈັກ. ໂຄງການຜະລິດໄຟຟ້າໄດ້ທັງໝົດ 11.355,16 GWh ເທົ່າກັບ 95,42% ຂອງແຜນປີ ເປັນເງິນ 657.449.069 ໂດລາສະຫະລັດ. ໃນນັ້ນ, ຂາຍໃຫ້

ກຟຜ 10.698,15 GWh ເປັນເງິນ 623.688.610 ໂດລາສະຫະລັດ ແລະ ຂາຍໃຫ້ ຟຟລ 657,01 GWh ເປັນເງິນ 33.760.459 ໂດລາສະຫະລັດ; ໂດຍໄດ້ນຳໃຊ້ຖ່ານຫີນ 14.110.355 ໂຕນ ແລະ ຫີນປູນ 250.873 ໂຕນ.

**ພະລັງງານໄຟຟ້າທີ່ຂາຍໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2015 ຫາ 2020)**




**ລາຍຮັບຈາກການຂາຍພະລັງງານໄຟຟ້າໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2015 ຫາ 2020)**



ໃນປີ 2020 ລັດຖະບານມີລາຍຮັບຄ່າພາກຫຼວງ ຈຳນວນ 10.135.885 ໂດລາສະຫະລັດ ແລະ ຄ່າທຳນຽມແຮ່ທາດ 14.361.228 ໂດລາສະຫະລັດ.

### ລາຍຮັບຂອງລັດຖະບານຈາກຄ່າພາກຫຼວງ ແລະ ຄ່າທຳນຽມການນຳໃຊ້ແຮ່ທາດ (ແຕ່ປີ 2015 ຫາ 2020)




ບໍລິສັດໂຄງການໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຈັດສັນຍົກຍ້າຍ ແລະ ວຽກງານສິ່ງແວດລ້ອມ-ສັງຄົມໃນເຂດໂຄງການໃຫ້ດີທີ່ສຸດ ໂດຍສະເພາະວຽກງານຊົດເຊີຍ ແລະ ພັນທະຫຼັງການຍົກຍ້າຍປະຊາຊົນທັງໝົດ 450 ຄອບຄົວ ໃນ 5 ບ້ານ, ລວມທັງການສຶກສາ, ສາທາລະນະສຸກ ແລະ ການສ້າງອາຊີບທີ່ຖາວອນ ເພື່ອພັດທະນາຊີວິດການເປັນຢູ່ຂອງຊຸມຊົນໃນເຂດໂຄງການໃຫ້ນັບມື້ນັບດີຂຶ້ນເລື້ອຍໆ. ພ້ອມດຽວກັນນັ້ນ, ໂຄງການຍັງໄດ້ປະຕິບັດຫຼາຍກິດຈະກຳຮ່ວມກັບຊຸມຊົນໃນທ້ອງຖິ່ນ ແລະ ໄດ້ຕິດຕາມກວດກາມາດຕະຖານດ້ານສິ່ງແວດລ້ອມໃນເຂດກໍ່ສ້າງຢ່າງປົກກະຕິ ເພື່ອຮັບປະກັນບໍ່ໃຫ້ເກີດມີຜົນກະທົບຕໍ່ຊຸມຊົນໃນເຂດດັ່ງກ່າວ.

### ກິດຈະກຳຕ່າງໆກ່ຽວກັບການສ້າງວຽກເຮັດງານທຳຂອງປະຊາຊົນພາຍຫຼັງມີໂຄງການ



## ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ

ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ຕັ້ງຢູ່ພາກໃຕ້ຂອງ ສປປ ລາວ, ເຂດຕິດຈອດລະຫວ່າງສອງແຂວງ ຄື: ແຂວງຈຳປາສັກ ແລະ ແຂວງອັດຕະປື ຊຶ່ງຕົ້ນນ້ຳຈາກແມ່ນ້ຳສາມສາຍ ຄື: ເຊປຽນ, ເຊນ້ຳນ້ອຍ ແລະ ຫ້ວຍໝາກຈັບ ເພື່ອມາຮັບໃຊ້ການຜະລິດໄຟຟ້າ. ມີກຳລັງຕິດຕັ້ງທັງໝົດ 410 MW ແລະ ມີມູນຄ່າການກໍ່ສ້າງໂຄງການ 1.090 ລ້ານໂດລາສະຫະລັດ. ໂຄງການໄດ້ເລີ່ມຜະລິດກະແສໄຟຟ້າຂາຍຢ່າງເປັນທາງການໃນວັນທີ 06/12/2019.

ເຂື່ອນເຊນ້ຳນ້ອຍ



ພາບລວມຄູກັ້ນນ້ຳ D



ບໍລິສັດໄຟຟ້າເຊປຽນ-ເຊນ້ຳນ້ອຍຈຳກັດ (PNPC) ປະກອບມີ 4 ຂາຮຸ້ນຄື: ບໍລິສັດ SK Engineering Construction (SK E&C) ຈາກ ສ.ເກົາຫຼີ, ບໍລິສັດ KOREA WESTERN POWER Co., Ltd (KOWEPO) ຈາກ ສ.ເກົາຫຼີ, ບໍລິສັດຣາຊບູລີ (RATCH Group) ແລະ ລັດວິສາຫະກິດຖືຮຸ້ນລາວ.

ບັນດາຂາຮຸ້ນໃນໂຄງການ



ໃນປີ 2020 ໂຄງການຜະລິດໄຟຟ້າໄດ້ 1.516 GWh ເປັນເງິນ 113.781.146 ໂດລາສະຫະລັດ. ໃນນັ້ນ, ຂາຍໃຫ້ ກຟຜ ໄດ້ 1.468 GWh ເປັນເງິນ 113.781.146 ໂດລາສະຫະລັດ, ຂາຍໃຫ້ ຟຟລ 48 GWh ເປັນເງິນ 3.115.874 ໂດລາສະຫະລັດ. ລັດຖະບານໄດ້ຮັບຄ່າພາກຫຼວງ ຈາກໂຄງການ 5.925.447 ໂດລາສະຫະລັດ.

ວຽກງານຊົດເຊີຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກເຫດການໃນທ້າຍປີ 2018 ທີ່ຜ່ານມາ, ບໍລິສັດໂຄງການ ພ້ອມກັບບັນດາຂາຮຸ້ນ ໄດ້ສືບຕໍ່ຮ່ວມກັບບັນດາພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ສຸມໃສ່ວຽກງານດັ່ງກ່າວດ້ວຍຄວາມເອົາໃຈໃສ່ສູງ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນໂດຍໄວ. ໃນວັນທີ 10/04/2020 ເຈົ້າແຂວງອັດຕະປື ໄດ້ເຊັນບົດບັນທຶກຕົກລົງເຫັນດີຮັບຮອງມູນຄ່າຂອງແຕ່ລະໂຄງການທີ່ປະຕິບັດໃນໄລຍະຜ່ານມາ. ນອກຈາກນີ້, ຍັງໄດ້ຮັບຮອງມູນຄ່າໜ້າວຽກທີ່ກຳລັງປະຕິບັດ ແລະ ແຜນການປະຕິບັດໃນຕໍ່ໜ້າ ລວມມີ 2 ວຽກໃຫຍ່ຄື: ວຽກຊົດເຊີຍຜົນກະທົບທາງກົງ 475,39 ຕື້ກີບ ແລະ ວຽກຊົດເຊີຍຕາມແຜນແມ່ບົດ 353,12 ຕື້ກີບ, ລວມມູນຄ່າທັງໝົດ 828,51 ຕື້ກີບ. ໃນວັນທີ 15/06/2020 ຫ້ອງການສຳນັກງານນາຍົກລັດຖະມົນຕີ ໄດ້ອອກແຈ້ງການເລກທີ 656/ຫສນຍ ເຫັນດີຮັບຮອງເອົາວຽກການຊົດເຊີຍຜົນກະທົບທາງກົງ ແລະ ວຽກຊົດເຊີຍຕາມແຜນແມ່ບົດດັ່ງກ່າວ.

ການກໍ່ສ້າງເຮືອນຖາວອນທັງໝົດຢູ່ໃນແຜນກໍ່ສ້າງມີ 812 ຫຼັງ ນຳໃຊ້ງົບປະມານມາຈາກ 3 ແຫຼ່ງຄື:

(1) ຈຳນວນ 46 ຫຼັງ ໄດ້ຮັບທຶນຊ່ວຍເຫຼືອຈາກລັດຖະບານໄທ, ຊຶ່ງສຳເລັດການກໍ່ສ້າງແລ້ວໃນວັນທີ 06/11/2020;

(2) ຈຳນວນ 66 ຫຼັງ ໄດ້ຮັບການຊ່ວຍເຫຼືອຈາກອົງການ JAPAN-LAO/UN-HABITAT ສຳເລັດການກໍ່ສ້າງແລ້ວ;

(3) ຈຳນວນ 700 ຫຼັງ ເປັນເງິນຊົດເຊີຍຈາກໂຄງການ, ຊຶ່ງມີເຮືອນວິນລາຊັ້ນດຽວ 80 ຫຼັງ, ເຮືອນກໍ່ລຸ່ມໄມ້ເທິງ 278 ຫຼັງ, ເຮືອນກໍ່ສອງຊັ້ນ 4 ຫຼັງ ແລະ ເຮືອນມີກ້ອງລ່າງ 338 ຫຼັງ. ແຂວງອັດຕະປືໄດ້ ມອບໝາຍໃຫ້ບໍລິສັດວັນແສງອັດຕະປືກໍ່ສ້າງ ແລະ ເຄຫາສະຖານເປັນຜູ້ຮັບເໝົາ, ຊຶ່ງໄດ້ເລີ່ມຕົ້ນດຳເນີນການກໍ່ສ້າງນັບແຕ່ຕົ້ນເດືອນມີນາ 2020 ເປັນຕົ້ນມາ, ບໍລິສັດດັ່ງກ່າວໄດ້ສຳເລັດການຕິດຕັ້ງສິ່ງອຳນວຍຄວາມສະດວກໃນການກໍ່ສ້າງເຊັ່ນ: ລະບົບນ້ຳ ແລະ ໄຟຟ້າເຂົ້າສະຖານທີ່ກໍ່ສ້າງ ໂດຍໃຊ້ທຶນຂອງບໍລິສັດກ່ອນ. ປະຈຸບັນ ກຳລັງດຳເນີນການກໍ່ສ້າງຢູ່ 3 ເຂດບ້ານຈັດສັນຄື: ບ້ານດົງບາກໃໝ່ຫີນຄຳ 354 ຫຼັງ, ປະຕິບັດໄດ້ 38,08%; ບ້ານຫີນລາດໃໝ່ 166 ຫຼັງ ປະຕິບັດໄດ້ 36,62%, ບ້ານດອນບົກ 77 ຫຼັງ ປະຕິບັດໄດ້ 27,82%; ສ່ວນຢູ່ເຂດທີ 4 ບ້ານປີ່ນດົງ 103 ຫຼັງ ບໍລິສັດກຳລັງດຳເນີນການຕິດຕັ້ງສິ່ງອຳນວຍຄວາມສະດວກເຂົ້າພື້ນທີ່ດັ່ງກ່າວ.

ການກໍ່ສ້າງເຮືອນຖາວອນ

ເຮືອນລັດຖະບານໄທຊ່ວຍເຫຼືອ

ເຮືອນອົງການ JAPAN-LAO/UN-HABITAT ຊ່ວຍເຫຼືອ





ການກໍ່ສ້າງເຮືອນຖາວອນໂດຍ PNPC/SKEC







## ໂຄງການໄຟຟ້ານ້ຳງຽບ 1

ໂຄງການໄຟຟ້ານ້ຳງຽບ 1 ຕັ້ງຢູ່ເມືອງບໍລິຄັນ, ແຂວງບໍລິຄຳໄຊ, ມີກຳລັງຕິດຕັ້ງທັງໝົດ 290 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດ 966 ລ້ານໂດລາສະຫະລັດ.

ເຂື່ອນໃຫຍ່



ເຂື່ອນນ້ອຍ



ບໍລິສັດໄຟຟ້ານ້ຳງຽບ 1 ຈຳກັດ (NNP1PC), ຊຶ່ງປະກອບດ້ວຍ 3 ຂາຮຸ້ນ ຄື: ບໍລິສັດ KPIC Netherlands B.V (Kansai), ບໍລິສັດ EGAT International ແລະ ລັດວິສາຫະກິດຖືຮຸ້ນລາວ.

## ບັນດາຂາຮຸ້ນໃນໂຄງການ




ການກໍ່ສ້າງໂຄງການໄດ້ສຳເລັດ ແລະ ຜະລິດໄຟຟ້າຂາຍຢ່າງເປັນທາງການ (COD) ວັນທີ 05/09/2019. ໃນປີ 2020 ໂຄງການຜະລິດໄຟຟ້າໄດ້ 1.114 GWh ເປັນເງິນ 82.988.368 ໂດລາສະຫະລັດ. ໃນນັ້ນ, ຂາຍໃຫ້ ກຟຜ 1.034 GWh ເປັນເງິນ 78.467.254 ໂດລາສະຫະລັດ ແລະ ຂາຍໃຫ້ ຟຟລ 80 GWh ເປັນເງິນ 4.521.114 ໂດລາສະຫະລັດ. ໂຄງການໄດ້ຈ່າຍຄ່າພາກຫຼວງໃຫ້ລັດຖະບານ 4.146.870 ໂດລາສະຫະລັດ.

ວຽກງານດ້ານສິ່ງແວດລ້ອມ-ສັງຄົມ: ໂຄງການໄດ້ສືບຕໍ່ຕິດຕາມ-ກວດກາຜົນກະທົບດ້ານສິ່ງແວດລ້ອມຈາກການກໍ່ສ້າງຢູ່ພາກສະໜາມເປັນປະຈຳເປັນຕົ້ນແມ່ນການຕິດຕາມກວດກາຄຸນະພາບນ້ຳ, ການກຳຈັດຂີ້ເຫຍື້ອ, ມົນລະພິດທາງອາກາດ, ມົນລະພິດທາງສຽງ. ນອກຈາກນັ້ນ, ໂຄງການໄດ້ສຳເລັດການຊົດເຊີຍໃຫ້ແກ່ປະຊາຊົນຜູ້ທີ່ຖືກຜົນກະທົບໃນເຂດເຂດ 3 (ຄຸ້ມທາດຊາຍຄຳ), ເຂດ 5 (ເຂດຫ້ວຍສູບ), ເຂດອ່າງເກັບນ້ຳຕອນລຸ່ມ 2LR, ເຂດອ່າງເກັບນ້ຳຕອນເທິງ 2UR, ເຂດ 4 (ເຂດລຸ່ມເຮືອນຈັກ) ແລະ ເຂດແລວສາຍສົ່ງ 230 kV (ຊົດເຊີຍທີ່ດິນ, ສິ່ງປຸກສ້າງ ແລະ ຊັບສິນຕ່າງໆ).

## ກິດຈະກຳຕ່າງໆກ່ຽວກັບການສ້າງວຽກເຮັດງານທຳຂອງປະຊາຊົນພາຍຫຼັງມີໂຄງການ



# ທຸລະກິດຂີ້ເທົ່າລອຍ ແລະ ຢິບຊຳ

## ❖ ທຸລະກິດຂີ້ເທົ່າລອຍ

ໃນປີ 2020 ລຮລ ຂາຍຂີ້ເທົ່າລອຍທັງໝົດ 172.247 ໂຕນ. ນອກຈາກນັ້ນ, ລຮລ ໄດ້ສະໜອງຂີ້ເທົ່າລອຍໃຫ້ແຂວງໄຊຍະບູລີຈຳນວນ 22.874 ໂຕນ ໃນຈຳນວນທັງໝົດ 230.000 ໂຕນ ເປັນເວລາ 8 ປີ ເພື່ອໃຊ້ເຂົ້າໃນໂຄງການພັດທະນາເສັ້ນທາງຮ່ອມເບຕົງຢູ່ບັນດາເມືອງພາຍໃນແຂວງ.

ໃບຢັ້ງຢືນມາດຖານສະຖາບັນເທັກໂນໂລຢີນາໆຊາດສິຣິນທອນ (SIIT) ມະຫາວິທະຍາໄລທຳມະສາດແຫ່ງປະເທດໄທ


Construction & Maintenance Technology Research Center (CONTEC)

CONTEC

CERTIFICATION

September 14, 2018

To whom it may concern

This is to certify that fly ash samples from Hongsa Power Plant (sampling on February 17, 2017) were tested at Construction and Maintenance Technology Research Center (CONTEC), Sirindhorn International Institute of Technology (SIIT), Thammasat University. Their qualities are equivalent to that of fly ashes in Thailand and satisfy with TIS 2135. Therefore, this is to confirm that fly ash from Hongsa Power Plant can be used in concrete if their qualities are satisfied with TIS 2135.

Certified by

(Professor Dr. Somnuk Tangtermsirikul)

Head of CONTEC and Acting Director
Sirindhorn International Institute of Technology
Thammasat University

ໃບຢັ້ງຢືນມາດຖານ ມລ 442-2019 1600/ກມວ


ມາດຕະຖານລາວ
LAO STANDARD

ມາດຕະຖານຂີ້ເຖົ່າລອຍຈາກຖ່ານຫີນ
ສຳລັບໃຊ້ເປັນວັດສະດຸປະສົມຄອນກີດ
STANDARD FOR COAL FLY ASH
FOR USE IN CONCRETE

ມລ 442 - 2019

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ນະຄອນຫຼວງວຽງຈັນ, ປີ 2019

## ❖ ທຸລະກິດຢິບຊຳ

ລຮລ ໄດ້ເຊັນສັນຍາຊື້-ຂາຍຢິບຊຳກັບລູກຄ້າ, ປະຈຸບັນແມ່ນຢູ່ໃນຂັ້ນຕອນການກະກຽມຄວາມພ້ອມໃນດ້ານຕ່າງໆ ເພື່ອສະໜອງໃນກາງປີ 2021 ນີ້.

ຮູບຈຳລອງໂຮງງານຢິບຊຳ



ການກໍ່ສ້າງໂຮງງານແປຮູບຢິບຊຳຂອງບໍລິສັດດວງແກ້ວ



# ໂຄງການໃໝ່ຢູ່ໃນແຜນຮ່ວມພັດທະນາ

## ໂຄງການໄຟຟ້າແສງຕາເວັນເທິງອ່າງເກັບນ້ຳໂຄງການໄຟຟ້ານ້ຳເທີນ 2

ໂຄງການໄຟຟ້າແສງຕາເວັນເທິງອ່າງເກັບນ້ຳໂຄງການນ້ຳເທີນ 2 ມີກຳລັງຕິດຕັ້ງ 240 MW ຢູ່ໃນຂັ້ນຕອນການເຈລະຈາສັນຍາພັດທະນາໂຄງການ (PDA) ກັບລັດຖະບານ.

ເຊັນບົດບັນທຶກຄວາມເຂົ້າໃຈ (MOU)
ລະຫວ່າງຂາຮຸ້ນສ້າງຕັ້ງຄະນະຊີ້ນຳສະເພາະກິດ




ຮູບຈຳລອງໂຄງການ




## ໂຄງການໄຟຟ້າພະລັງງານຄວາມຮ້ອນຖ່ານຫີນບົວລະພາ

ໂຄງການໄຟຟ້າພະລັງງານຄວາມຮ້ອນຖ່ານຫີນບົວລະພາ ແຂວງຄຳມ່ວນ ມີກຳລັງຕິດຕັ້ງ 2.000 MW ທີ່ບັນລຸການເຊັນສັນຍາສຳປະທານ (CA) ໃນວັນທີ 9 ມີນາ 2021 ທີ່ຜ່ານມາ.

ຮູບຈຳລອງໂຄງການ



ພິທີເຊັນສັນຍາສຳປະທານ (CA)
ໃນວັນທີ 09/03/2021



## ການບໍລິຫານ ແລະ ການປະຕິບັດສັນຍາໂຄງການ

ລຮລ ໄດ້ເອົາໃຈໃສ່ບໍລິຫານບັນດາສັນຍາໂຄງການ ທີ່ພົວພັນກັບໂຄງການທີ່ຕົນຮ່ວມຖືຮຸ້ນຢ່າງມີຄວາມຮັບຜິດຊອບສູງເຊັ່ນ: ສັນຍາຜູ້ຖືຮຸ້ນ, ສັນຍາສະໜອງທຶນໂຄງການ, ສັນຍາສາມຝ່າຍ ແລະ ສັນຍາເງິນກູ້ຢືມຕໍ່ຈາກກະຊວງການເງິນ. ໃນແຕ່ລະປີ ລຮລ ໄດ້ຊຳລະຕົ້ນທຶນ-ດອກເບ້ຍເງິນກູ້ຢືມໃຫ້ກະຊວງການເງິນຕາມສັນຍາເປັນແຕ່ລະໂຄງການດັ່ງລຸ່ມນີ້: (ໃນປີ 2020 ຊຳລະຕົ້ນທຶນ-ດອກເບ້ຍ ແລະ ຄ່າທຳນຽມເງິນກູ້ຢືມ ຈຳນວນ 30.826.168 ໂດລາສະຫະລັດ. ແຕ່ປີ 2016-2020 ມີທັງໝົດຈຳນວນ 157.700.789 ໂດລາສະຫະລັດ).

### ການຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້ານ້ຳເທີນ 2 (ແຕ່ປີ 2011 ຫາ 2020)




### ການຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້າຫົງສາ (ແຕ່ປີ 2016 ຫາ 2020)



## ການຊໍາລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້າເຊປຽນ-ເຊນໍ້ານ້ອຍ (ແຕ່ປີ 2016 ຫາ 2020)




## ການຊໍາລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້ານໍ້າງຽບ 1 (ແຕ່ປີ 2016 ຫາ 2020)



## ການປະຕິບັດພັນທະຕາມກົດໝາຍ

ລຮລ ໄດ້ຖືສຳຄັນ ແລະ ເອົາໃຈໃສ່ຢ່າງເຂັ້ມງວດໃນການປະຕິບັດພັນທະຕາມກົດໝາຍແກ່ລັດຖະບານ ແລະກຳນົດເວລາທຸກຄັ້ງ,ຊຶ່ງໃນປີ 2020 ລຮລ ສາມາດປະກອບພັນທະເຂົ້າງົບປະມານຂອງລັດຖະບານໄດ້ 599.126 ໂດລາສະຫະລັດ; ໃນນັ້ນມາຈາກອາກອນເງິນປັນຜົນ 196.432 ໂດລາສະຫະລັດ, ອາກອນກຳໄລ 215.285 ໂດລາສະຫະລັດ ແລະ ອາກອນອື່ນໆ 187.409 ໂດລາສະຫະລັດ. ແຕ່ປີ 2016-2020 ລຮລ ສາມາດປະກອບພັນທະເຂົ້າງົບປະມານຂອງລັດຖະບານໄດ້ 16.484.672 ໂດລາສະຫະລັດ; ໃນນັ້ນມີອາກອນເງິນປັນຜົນ 15.106.301 ໂດລາສະຫະລັດ, ອາກອນກຳໄລ 215.285 ໂດລາສະຫະລັດ ແລະ ອາກອນອື່ນໆ 1.163.086 ໂດລາສະຫະລັດ.

**ການປະຕິບັດພັນທະຕ່າງໆໃຫ້ແກ່ລັດຖະບານ (ແຕ່ປີ 2011 ຫາ 2020)**




## ການບໍລິຫານລາຍຮັບ-ລາຍຈ່າຍ

ລຮລ ໄດ້ເອົາໃຈໃສ່ບໍລິຫານລາຍຮັບ-ລາຍຈ່າຍດ້ວຍຄວາມໂປ່ງໃສຕາມກົດໝາຍຢ່າງເຂັ້ມງວດ, ໂດຍມີການກວດສອບຈາກຫ້ອງການກວດສອບພາຍໃນຂອງຕົນປະຈຳທຸກໆໄຕມາດ, ຖືກກວດສອບຈາກອົງການກວດສອບແຫ່ງລັດໃນທຸກໆ 2 ປີແລະຖືກກວດສອບໂດຍບໍລິສັດກວດສອບພາຍນອກ (PwC) ປະຈຳ 6 ເດືອນຕົ້ນປີ ແລະ ປະຈຳປີ ເພື່ອສົ່ງບົດລາຍງານທາງດ້ານການເງິນໃຫ້ແກ່ບັນດາທະນາຄານຜູ້ສະໜອງທຶນຕາມພັນທະສັນຍາ. ໃນປີ 2020 ລຮລ ມີລາຍຮັບ 26.249.505 ໂດລາສະຫະລັດ ແລະ ມີລາຍຈ່າຍບໍລິຫານພຽງແຕ່ 3.278.344 ໂດລາສະຫະລັດ. ແຕ່ປີ 2016-2020 ລຮລ ມີລາຍຮັບທັງໝົດ 188.530.141 ໂດລາສະຫະລັດ ທຽບກັບລາຍຈ່າຍບໍລິຫານມີ 31.966.794 ໂດລາສະຫະລັດ ແລະ ມີຜົນກຳໄລ 56.940.766 ໂດລາສະຫະລັດ.

## ສົມທຽບລາຍຮັບ-ລາຍຈ່າຍບໍລິຫານສະສົມຂອງ ລຮລ (ແຕ່ປີ 2011 ຫາ 2020)




## ຜົນກຳໄລຫຼັງຫັກອາກອນ (ແຕ່ປີ 2016 ຫາ 2020)



## ການພັດທະນາບຸກຄະລາກອນ ແລະ ອົງກອນ

ລຣລ ໄດ້ຖືສຳຄັນການພັດທະນາລະດັບຄວາມຮູ້-ຄວາມສາມາດຂອງພະນັກງານ ໂດຍໄດ້ແນໃສ່ວຽກງານວິຊາສະເພາະທີ່ພົວພັນກັບທຸລະກິດຂອງຕົນ ຜ່ານການຖ່າຍທອດຄວາມຮູ້ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນດ້ວຍການຈັດຝຶກອົບຮົມພາຍໃນຢ່າງເປັນປະຈຳ. ພ້ອມດຽວກັນນັ້ນ ລຣລ ຍັງໄດ້ສົ່ງພະນັກງານໄປຍົກລະດັບປະລິນຍາຕີ 1 ຄົນ, ປະລິນຍາໂທທັງພາຍໃນ ແລະ ຕ່າງປະເທດ 4 ຄົນ (ສຳເລັດການສຶກສາແລ້ວ 3 ຄົນ, 1 ຄົນຢູ່ ສສ ຫວຽດນາມ ແລະ ພາຍໃນ 2 ຄົນ, ສ່ວນອີກ 1 ຄົນຢູ່ ສປ ຈີນ ຍັງສືບຕໍ່), ສົ່ງໄປຍົກລະດັບພາສາອັງກິດ ທີ່ສະຖາບັນການຕ່າງປະເທດ ກະຊວງການຕ່າງປະເທດ 2 ຄົນ. ນອກຈາກນັ້ນ, ລຣລ ກໍ່ໄດ້ສົ່ງພະນັກງານເຂົ້າຮ່ວມການສຳມະນາ ແລະການຝຶກອົບຮົມນຳພາກສ່ວນອື່ນອີກ.

**ກອງປະຊຸມຊຸກຍູ້ ແລະ ປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍໄຟຟ້າ ແລະ ກົດໝາຍວ່າດ້ວຍບໍ່ແຮ່**




**ຝຶກອົບຮົມການປະເມີນ ແລະ ວິເຄາະມູນຄ່າລວມຂອງໂຄງການ, ສັນຍາຊື້-ຂາຍໄຟຟ້າໂຄງການ IPP ແລະ ການສຶກສາທາງດ້ານເຕັກນິກ**



**ຝຶກອົບຮົມບັນຊີວິສາຫະກິດ**



**ການຝຶກອົບຮົມກ່ຽວກັບຄວາມປອດໄພຂອງເຂື່ອນ**



ລຮລ ໄດ້ສືບຕໍ່ປະຕິບັດລະບົບບໍລິຫານຄຸນະພາບຕາມມາດຕະຖານສາກົນ ISO 9001:2015 ດ້ວຍຄວາມເອົາໃຈໃສ່ ໂດຍໄດ້ຕິດຕາມ, ກວດກາການຈັດຕັ້ງປະຕິບັດຕົວຊີ້ວັດຄຸນະພາບວຽກ (KPI), ການຄຸ້ມຄອງຮັກສາ ແລະ ດຳເນີນເອກະສານ, ການແກ້ໄຂຂໍ້ບົກຜ່ອງທີ່ກວດພົບ ເພື່ອທົບທວນ-ຕີລາຄາຄືນດ້ານດີ, ດ້ານຄົງຄ້າງ ແລະ ວາງມາດຕະການແກ້ໄຂໃຫ້ທັນເວລາ. ພ້ອມດຽວກັນນັ້ນ, ລຮລ ໄດ້ສຳເລັດການຕໍ່ອາຍຸໃບຢັ້ງຢືນລະບົບບໍລິຫານຄຸນນະພາບດັ່ງກ່າວອອກໄປອີກ 3 ປີ (2021-2023).

ກອງປະຊຸມທົບທວນການຈັດຕັ້ງບໍລິຫານ ISO 9001:2015 ປີ 2020



ໃບຢັ້ງຢືນ ISO 9001:2015


GCL INTERNATIONAL

Certificate of Registration

QUALITY MANAGEMENT SYSTEM

LAO HOLDING STATE ENTERPRISE

ISO 9001:2015

IAF

## ການປະກອບສ່ວນຕໍ່ສັງຄົມ

ລຮລ ໄດ້ເອົາໃຈໃສ່ໃນການປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມ, ສົມທົບທຶນ, ອຸປະຖຳ, ປະກອບສ່ວນ, ສະໜັບສະໜູນໃຫ້ແກ່ບັນດາອົງການຈັດຕັ້ງພັກ-ລັດ, ມອບເປັນວັດຖຸອຸປະກອນການສຶກສາ, ເຄື່ອງອຸປະໂພກ-ບໍລິໂພກໃຫ້ແກ່ພາກສ່ວນທີ່ຂາດເຂີນຢູ່ຫ່າງໄກສອກຫຼີກເປັນຕົ້ນແມ່ນໝູ່ບ້ານທີ່ໄດ້ຮັບຜົນກະທົບຈາກບັນດາໂຄງການທີ່ ລຮລ ຮ່ວມຖືຮຸ້ນ. ນອກຈາກນີ້, ຍັງໄດ້ເອົາໃຈໃສ່ປະກອບສ່ວນອຸປະຖຳເທດການສຳຄັນຕ່າງໆຂອງຊາດ. ໃນປີ 2020 ລຮລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຈຳນວນ 23 ຄັ້ງ ເປັນເງິນທັງໝົດ 393.092.500 ກີບ.

ມອບເງິນຊຸກຍູ້ກອງປະຊຸມໃຫຍ່ອົງຄະນະພັກກະຊວງການເງິນ




ປະກອບສ່ວນຊຸກຍູ້ວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 72 ປີ ຮ່ວມກັບການນຳກະຊວງພະລັງງານ ແລະ ບໍ່ແຮ່



**ມອບເງິນຊຸກຍູ້ກອງປະຊຸມໃຫຍ່ຜູ້ແທນກຳມະບານທົ່ວປະເທດ ຄັ້ງທີ VIII**



**ມອບເງິນອຸປະຖຳໜ່ວຍກູ້ໄພນະຄອນຫຼວງ**



## ພາກສະຫຼຸບ

ການດຳເນີນທຸລະກິດໃນປີ 2020 ແມ່ນໄດ້ຮັບຜົນສຳເລັດດີເຊັ່ນ: ໂຄງການໄຟຟ້ານ້ຳເທີນ 2 ຜະລິດໄຟຟ້າໄດ້ 4.953 GWh, ໂຄງການໄຟຟ້າຄວາມຮ້ອນຫົງສາ ຜະລິດໄຟຟ້າໄດ້ 11.355,16 GWh, ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ແລະ ໂຄງການໄຟຟ້ານ້ຳງຽບ 1 ໄດ້ສຳເລັດການກໍ່ສ້າງ ແລະ ເລີ່ມການຜະລິດໄຟຟ້າຂາຍຢ່າງເປັນທາງການ. ລຮລ ມີລາຍຮັບ 26.249.505 ໂດລາສະຫະລັດ. ລຮລ ໄດ້ເອົາໃຈໃສ່ໃນການຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍຂອງຕົນຢ່າງມີປະສິດທິຜົນ ແລະ ມີຄວາມໂປ່ງໃສ ໂດຍໄດ້ມີການກວດສອບຈາກພາຍໃນ-ພາຍນອກເປັນປະຈຳ. ຜົນສຳເລັດທັງໝົດທີ່ຍາດມາໄດ້ນັ້ນແມ່ນຍ້ອນການຊີ້ນຳ-ນຳພາຢ່າງໃກ້ຊິດຈາກການນຳຂອງກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ, ສະພາບໍລິຫານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງສົມທົບກັບຄວາມສູ້ຊົນ, ຄວາມບຸກບືນຫ້າວຫັນ ແລະ ຄວາມພະຍາຍາມຂອງຄະນະນຳ ລຮລ ທີ່ໄດ້ສຸມທຸກເຫື່ອແຮງ ແລະ ສະຕິປັນຍາໃນການນຳພາພະນັກງານ ລຮລ ຈັດຕັ້ງປະຕິບັດໜ້າທີ່ໆໄດ້ຮັບມອບໝາຍຈົນໄດ້ຮັບຜົນສຳເລັດເປັນກ້າວໆມາ. ລຮລ ຈະສືບຕໍ່ປະຕິບັດວຽກງານຕາມພາລະບົດບາດ-ໜ້າທີ່ຂອງຕົນໃຫ້ບັນລຸຕາມແຜນການທີ່ໄດ້ວາງໄວ້ ແລະ ນຳໃຊ້ທຸກທ່າແຮງສ້າງໃຫ້ມີຜົນສຳເລັດອັນໃໝ່ ເພື່ອປະກອບສ່ວນສ້າງລາຍຮັບເຂົ້າງົບປະມານຂອງລັດໃຫ້ໄດ້ຫຼາຍຂຶ້ນ.


ProjectFinance
and InfrastructureFinance
Deals of the Year 2010
Asia-Pacific Power
Hongsa
Ratchaburi Electricity Generating
Lao Holding State Enterprise, Banpu
Bangkok Bank
Bangkok Bank, Siam Commercial Bank, Krung Thai Bank, Government Savings Bank
Kasikornbank, Bank of Ayudhya, Siam City Bank, TMB Bank
Export-Import Bank of Thailand
Milbank Tweed Hadley & McCloy, Latham & Watkins
Chandler & Tong, DFDL Mekong Law, LS Horizon


GlobalEnergy
magazine
Awards2011
Hydroelectric Power Project of the Year
Nam Theun 2, Laos
As voted by our readers
Global Energy Magazine Editor-in-chief Sarah O'Toole comments:
"Throughout 2010 and 2011, the Nam Theun 2 Power Project inLaosgained the respect of the global energy industry. Through hard work, rigour, compromise and sheer determination, coupled with paramount support from banks and multilateral agencies, the Nam Theun 2 management team realized t acclaimed power project. Representatives form over 100 different countries voted for Nam Thuen 2 as being 'Hydroelectric Power Project of the Year' in Global Energy Magazine's 2011 awards programme. Our sincerest congratulations."


IJGlobal
Asia Pacific
Awards 2014
Asia Pacific Hydro
WINNER
Nam Ngiep 1


The President of
ASSOCIATION OTHERWAYS
MANAGEMENT & CONSULTING
PARIS - FRANCE
Certifies that
LHSE
ລັດວິສາຫະກິດຖືຮຸ້ນລາວ
LAO HOLDING STATE ENTERPRISE
has been selected to receive
The Majestic Falcon Award
for Quality & Excellence
28th November 2016
Dubai-U.A.E
The President,
Charbel S. Tabet
The Majestic Falcon Award for Quality & Excellence
OTHERWAYS
Dubai 2016

GCL® INTERNATIONAL

# Certificate of Registration

*This is to certify that the*

**QUALITY MANAGEMENT SYSTEM**

*of*

**LAO HOLDING STATE ENTERPRISE**

**Lane Xang Avenue, Hatsady Village, Chanthabouly District, P.O.Box 11536, Vientiane Capital, LAO P.D.R.**

**Ban Phonchanh, Hongsa District, Sayabouly Province, LAO P.D.R.**

*for*

**Holding and Managing of Shares in Independent Power Producer (IPP) Projects and Related Businesses. Sale and Distribution of Fly Ash.**

*has been assessed and registered against the provisions of*

**ISO 9001:2015**

*International Standard*

*with*

| | | | |
|---|---|---|---|
| Registration Number: | 63Q16125 | Cycle Start Date: | 15 December 2020 |
| Project: | 56-16125-3-Q | Approval Date: | 18 December 2020 |
| | | Issue Date: | 18 December 2020 |
| Certification Approved By: | | Expiry Date: | 15 December 2023 |

Doug Page-Symonds
Chief Executive Officer

UKAS MANAGEMENT SYSTEMS 5965

This certificate remains the property of GCL International Ltd. The Registration is subject to the Scheme Rules which are published at www.gcl-intl.com. Any misuse, alteration, forgery or falsification is an unlawful act. Please validate the authenticity of this certificate by visiting www.gcl-intl.com

**GCL INTERNATIONAL LTD**
Level 1, Devonshire House, One Mayfair Place, London, W1J 8AJ, United Kingdom.

S/N: 80014836
PIN: 43418805

GCL® INTERNATIONAL — ISO 9001

UKAS MANAGEMENT SYSTEMS — 5965

**Cert No. 63Q16125**


ກອງປະຊຸມສະຫຼຸບວຽກງານປະຈຳປີ 2019
ແລະ ແຜນການປີ 2020
ລັດວິສາຫະກິດຖືຮຸ້ນລາວ
ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ວັນທີ 6 ມີນາ 2020
LHSE
EXIT

**ລັດວິສາຫະກິດຖືຮຸ້ນລາວ Lao Holding State Enterprise**

ຖະໜົນລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບູລີ, ຕູ້ໄປສະນີ 11536 ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856-21) 263805; ແຟັກ: (+85621) 263804

Lane Xang Avenue, Chanthabouly, P.O Box 11536 Vientiane, Lao PDR, Tel:( +856-21) 263805; Fax: (+85621) 263804